ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມການຄ້າພາຍໃນ

0867

ເລກທີ /ກຄພນ

ນະຄອນຫຼວງວຽງຈັນ, ວັນທີ 06 ສິງຫາ 2024

# ແຈ້ງການ

**ເຖິງ** : ພະແນກອຸດສາຫະກຳ ແລະ ການຄ້າແຂວງ/ນະຄອນຫຼວງ ໃນຂອບເຂດທົ່ວປະເທດ.

**ເລື່ອງ**: ສະຫຼຸບລາຍງານວຽກງານພັດທະນາຕາໜ່າງການຄ້າ ຢູ່ພາຍໃນແຂວງ/ນະຄອນຫຼວງ.

- ອີງຕາມ ຂໍ້ຕົກລົງວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມການຄ້າພາຍໃນ ສະບັບເລກທີ 2077/ອຄ, ລົງວັນທີ 15 ພະຈິກ 2023;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍຕະຫຼາດ ສະບັບເລກທີ 0903/ອຄ.ຄພນ, ລົງວວັນທີ 20 ພຶດສະພາ 2013.
- ອີງຕາມ ຂໍ້ຕົກລົງວ່າດ້ວຍ ສູນການຄ້າ ແລະ ຮ້ານສັບພະສິນຄ້າ ສະບັບເລກທີ 1950/ອຄ.ຄພນ, ລົງວັນທີ 22 ກັນຍາ 2015;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍທຸລະກິດການຄ້າ ຂາຍຍົກ-ຂາຍຍ່ອຍ ສະບັບເລກທີ 1005/ອຄ.ຄພນ, ລົງວັນທີ 22 ພຶດສະພາ 2015;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍທຸລະກິດການຈຳໜ່າຍວັດຖຸມີຄ່າ ສະບັບເລກທີ 1145/ອຄ.ກຄພນ, ລົງວັນທີ 01 ທັນວາ 2021;

ກົມການຄ້າພາຍໃນ, ກະຊວງ ອຸດສາຫະກຳ ແລະ ການຄ້າ ຂໍຖືເປັນກຽດແຈ້ງມາຍັງ ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ຊາບ ແລະ ຈັດຕັ້ງປະຕິບັດການສະຫຼຸບ ແລະ ລາຍງານວຽກງານພັດທະນາຕາໜ່າງການຄ້າ ເປັນຕົ້ນ ວຽກງານຄຸ້ມຄອງຕະຫຼາດ, ສູນການຄ້າ, ຮ້ານສັບພະສິນຄ້າ, ການຈຳໜ່າຍຍານພາຫະນະທາງບົກ (ລວມທັງລົດໄຟຟ້າ), ຈຳໜ່າຍວັດຖຸມີຄ່າ ແລະ ການຄ້າຂາຍຍົກ ແລະ ຂາຍຍ່ອຍ ພາຍໃນແຂວງ, ນະຄອນຫຼວງ ລະອຽດດັ່ງລຸ່ມນີ້:

1. ມອບໃຫ້ ພະແນກອຸດສາຫະກຳ ແລະ ການຄ້າແຂວງ/ນະຄອນຫຼວງ ສະຫຼຸບ, ສັງລວມ ແລະ ລາຍງານວຽກງານພັດທະນາຕາໜ່າງການຄ້າ ຕາມຮ່າງລາຍງານທີ 1,2,3,4,5 ແລະ 6 ຕາມທີ່ໄດ້ກຳນົດໄວ້ ແມ່ນໃຫ້ລາຍງານເປັນສອງຄັ້ງຕໍ່ປີ ຄື: ຄັ້ງທີ 1 ປະຈຳ 06 ເດືອນຕົ້ນປີ (ນັບແຕ່ເດືອນມັງກອນ ຫາເດືອນມິຖຸນາ ) ແລະ ຄັ້ງທີ 2 ປະຈຳ 6 ເດືອນທ້າຍປີ ( ນັບແຕ່ເດືອນກໍລະກົດ ຫາເດືອນທັນວາ). ສຳລັບການສະຫຼຸບຄັ້ງທີ 02 ປະຈຳທ້າຍປີ ໃຫ້ເອົາຕົວເລກ 6 ເດືອນຕົ້ນປີ ລວມເຂົ້າກັນກັບຕົວເລກ 6 ເດືອນທ້າຍປີ ເປັນຕົວເລກປະຈຳປີ;

2. ມອບໃຫ້ ພະແນກອຸດສາຫະກຳ ແລະ ການຄ້າແຂວງ/ນະຄອນຫຼວງ ສົ່ງບົດລາຍງານໃຫ້ກົມການຄ້າພາຍໃນ, ກະຊວງອຸດສາຫະກຳ ແລະ ການຄ້າ ໃນຄັ້ງທີ 1 ປະຈຳ 6 ເດືອນຕົ້ນປີ ພາຍໃນເດືອນກໍລະກົດຂອງທຸກໆປີ, ສຳລັບຄັ້ງທີ 2 ປະຈຳ 6 ເດືອນທ້າຍປີ ຫຼື ປະຈຳປີ ກຳນົດພາຍໃນວັນທີ 20 ເດືອນທັນວາຂອງທຸກໆປີ;
3. ມອບໃຫ້ ພະແນກອຸດສາຫະກຳ ແລະ ການຄ້າແຂວງ/ນະຄອນຫຼວງ ລາຍງານຄືນຂໍ້ມູນສະຖິຕິປະຈຳປີ 2023 ແລະ ປະຈຳ 06 ເດືອນຕົ້ນປີ 2024 ແລ້ວສົ່ງໃຫ້ ກົມການຄ້າພາຍໃນກ່ອນເດືອນກັນຍາ 2024;
4. ມອບໃຫ້ ພະແນກອຸດສາຫະກຳ ແລະ ການຄ້າແຂວງ/ນະຄອນຫຼວງ ຊີ້ນຳບັນດາຫ້ອງການອຸດສາຫະກຳ ແລະ ການຄ້າເມືອງພາຍໃນແຂວງຂອງຕົນ ເກັບກຳ, ສະຫຼຸບ, ສັງລວມ ແລະ ລາຍງານວຽກງານພັດທະນາຕາໜ່າງການຄ້າ ຕາມແບບຟອມທີ່ໄດ້ກ່າວມາຂ້າງເທິງ ແລະ ກຳນົດເວລາໃຫ້ທັນກັບການລາຍງານຂອງພະແນກອຸດສາຫະກຳ ແລະ ການຄ້າແຂວງ/ນະຄອນຫຼວງ ໃນແຕ່ລະໄລຍະທີ່ໄດ້ກຳນົດໄວ້;

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດ.

**ຫົວໜ້າກົມ**

ສັນຕິສຸກ ພູນສະຫວັດ

ເບີຕິດຕໍ່ປະສານ:
ພະແນກ ພັດທະນາຕາໜ່າງການຄ້າ
1. ທ່ານ ອານຸສິດ ບຸດທະລາດ 020 91678461
2. ທ່ານ ນ ວັດສະລິນ ອິນທະວົງ 020 9899979

ເອກະສານຄັດຕິດ ແຈ້ງການ 0867/ກຄພນ, ລົງວັນທີ 06 ສິງຫາ 2024